ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 15 ຫາ 19 ກໍລະກົດ 2024




ກະຊວງກະສິກຳ ແລະ ປ່າໄມ້ ຮ່ວມກັບນະຄອນຫຼວງວຽງຈັນ ປ່ອຍປາ 400.000 ໂຕ ລົງສູ່ທຳມະຊາດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້

# ກະຊວງກະສິກຳ ແລະປ່າໄມ້ຮ່ວມກັບນະຄອນຫຼວງວຽງຈັນ ປ່ອຍປາ 400.000 ໂຕ ລົງສູ່ທຳມະຊາດ

ຂ່າວໂດຍ: ວິທະຍຸກະຈາຍສຽງແຫ່ງຊາດ (ວສລ)
ພາບໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນຕອນເຊົ້າ ວັນທີ 13 ກໍລະກົດ 2024, ທີ່ບ້ານຮ່ອງສຸພາບ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ກະຊວງກະສິກຳ ແລະປ່າໄມ້ ຮ່ວມກັບນະຄອນຫລວງວຽງຈັນ ຈັດພິທີປ່ອຍປາລົງສູ່ທຳມະຊາດ ໂອກາດສະເຫຼີມສະຫຼອງວັນປ່ອຍປາ ແລະ ສັດນ້ຳ ແຫ່ງຊາດ.

ເຂົ້າຮ່ວມໃນພິທີ ມີທ່ານ ບຸນທອງ ຈິດມະນີ ,ຮອງປະທານປະເທດ, ທ່ານ ລີນຄຳ ດວງສະຫວັນ, ລັດຖະມົນຕີ ກະຊວງ ກະສິກຳແລະ ປ່າໄມ້; ທ່ານ ອາດສະພັງທອງ ສີພັນດອນ ເຈົ້າຄອງນະຄອນຫຼວງວຽງຈັນ; ພ້ອມດ້ວຍ ເອກອັກຄະລັດຖະທູດ ຮົງກາລີ ປະຈຳ ສປປ ລາວ, ຜູ້ຕາງໜ້າອົງການຈັດຕັ້ງສາກົນ ແລະ ປະຊາຊົນບ້ານໃກ້ຄຽງເຂົ້າຮ່ວມ.

ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ກ່າວວ່າ: ວັນທີ 13 ກໍລະກົດ ຂອງທຸກໆປີ ແມ່ນ ວັນປ່ອຍປາ ແລະ ສັດນ້ຳ ແຫ່ງຊາດ ທີ່ໄດ້ກຳນົດໃນ ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ ຊຶ່ງໃນໄລຍະຜ່ານມາ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ປະສານສົມທົບກັບທຸກພາກສ່ວນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ຄວາມສຳຄັນຕໍ່ວັນດັ່ງກ່າວ ດ້ວຍການໂຄສະນາເຜີຍແຜ່ກົດໝາຍ ແລະ ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງ ຢ່າງກວ້າງຂວາງໃນຂອບເຂດທົ່ວປະເທດ ເພື່ອເຮັດໃຫ້ທຸກພາກສ່ວນ ໃນສັງຄົມເຂົ້າໃຈ ແລະ ເອົາໃຈໃສ່ຕໍ່ວຽກງານການພັດທະນາ, ການອະນຸລັກ, ການຄຸ້ມຄອງ ແລະ ນຳໃຊ້ ປາ ແລະ ສັດນ້ຳ ໃຫ້ມີຄວາມຍືນຍົງ ເພື່ອປະກອບສ່ວນເຂົ້າໃນການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ພ້ອມທັງຜະລິດເປັນສິນຄ້າ ເພື່ອສ້າງລາຍຮັບໃຫ້ປະຊາຊົນລາວນັບມື້ຫລາຍຂຶ້ນ.

ຈາກການປະກອບສ່ວນຄືດັ່ງກ່າວນັ້ນ ໄດ້ເຮັດໃຫ້ການພັດທະນາ, ການອະນຸລັກ, ການຄຸ້ມຄອງວຽກສັດນ້ຳ ແລະ ການປະມົງ ມີຫຼາຍດ້ານ ທີ່ພົ້ນເດັ່ນ ເປັນຕົ້ນ ໄດ້ເຮັດໃຫ້ຈຳນວນປາ ແລະ ສັດນ້ຳປ່ອຍລົງແຫຼ່ງນ້ຳທຳມະຊາດ, ຫ້ວຍຮ່ອງຄອງບຶງ, ໜອງຕ່າງໆ ເພີ່ມຂຶ້ນໃນແຕ່ລະປີ ຄື: ປີ 2021 ປ່ອຍໄດ້ 58 ລ້ານໂຕ, ປີ 2022 ໄດ້ 61 ລ້ານໂຕ ແລະ ປີ 2023 ປ່ອຍໄດ້ 62 ລ້ານໂຕ; ຂະແໜງກະສິກຳ ແລະ ປ່າໄມ້ໄດ້ເອົາໃຈໃສ່ ພັດທະນາ, ຊຸກຍູ້-ສົ່ງເສີມພື້ນຖານການຜະລິດ ແນວພັນປາ-ແນວພັນສັດນ້ຳ ຊຶ່ງໃນທົ່ວປະເທດມີສູນ, ສະຖານີທີ່ຜະລິດລູກປາຂອງລັດຫລາຍກວ່າ 50 ແຫ່ງ, ຟາມຜະລິດລູກປາຂອງເອກະຊົນ ຫຼາຍກວ່າ 140 ແຫ່ງ ແລະ ການຜະລິດລູກປາແບບຄອບຄົວມີຫລາຍກວ່າ 400 ແຫ່ງ ສາມາດສະໜອງແນວພັນປາ ໃຫ້ສັງຄົມໄດ້ ຈຳນວນ 290 ລ້ານກວ່າໂຕ ຫລື ເທົ່າກັບ 73% ຂອງຄວາມ ຕ້ອງການພາຍໃນ. ບັນດາສູນດັ່ງກ່າວໄດ້ຄົ້ນຄວ້າທົດລອງລ້ຽງ ແລະ ຂະຫຍາຍພັນ ປາ ແລະ ສັດນ້ຳ ພື້ນເມືອງໄດ້ຫຼາຍຊະນິດ ເປັນຕົ້ນແມ່ນ ປາເຄິງ, ປາກົດ, ປາເໜັ້ນ ແລະ ປາເຂັງ. ພ້ອມກັນນັ້ນ, ບັນດາທ້ອງຖິ່ນກໍ່ໄດ້ເອົາໃຈໃສ່ການອະນຸລັກສັດນ້ຳດ້ວຍການ ສ້າງວັງສະຫງວນ ຕາມແຫຼ່ງນ້ຳທຳມະ



ຊາດຕ່າງໆ ຊຶ່ງມາຮອດປະຈຸບັນ ໃນທົ່ວປະເທດມີວັງສະຫງວນປາ ຫລາຍກວ່າ 1.100 ວັງ ໃນນັ້ນ ມີຄະນະຄຸ້ມຄອງວັງສະຫງວນແລ້ວ 890 ວັງ.

ສຳລັບປີນີ້, ກະຊວງກະສິກຳ ແລະ ປ່າໄມ້ໄດ້ສົມທົບກັບ ອົງການປົກຄອງແຂວງ, ນະຄອນຫຼວງ ມີແຜນຈະປ່ອຍປາຄືນສູ່ແຫຼ່ງນ້ຳທຳມະຊາດໃນຂອບເຂດທົ່ວປະເທດໃຫ້ໄດ້ 64 ລ້ານໂຕ. ສຳລັບພິທີທາງການມື້ນີ້ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ປະສານສົມທົບກັບ ອົງການປົກຄອງນະຄອນຫຼວງວຽງຈັນ ເລືອກເອົາ ບ້ານຮ່ອງສຸພາບ ແຫ່ງນີ້ ເປັນຈຸດປ່ອຍປາຄືນສູ່ທຳມະຊາດ ເຊິ່ງປາທີ່ຈະນຳມາປ່ອຍທັງໝົດມີ 400.000 ໂຕ. ໃນນີ້ມີ ປາປາກ, ປາເຄິງ, ປາກົດ, ປາເໜັ້ນ, ປາເພັ້ຍ, ປາອີໄທ, ປາວຽນໄຟ ແລະ ປາຊະນິດອື່ນໆ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;